ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 242 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍມໍຣະດົກແຫ່ງຊາດ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 38/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 15 ທັນວາ 2021.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍ ວ່າດ້ວຍມໍຣະດົກແຫ່ງຊາດ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 37 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 15 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 11 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍມໍລະດົກແຫ່ງຊາດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນ ເພື່ອຮັກສາໄວ້ ຊຶ່ງຄຸນຄ່າ ຂອງມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແນໃສ່ສຶກສາອົບຮົມພົນລະເມືອງໃຫ້ມີນ້ຳໃຈຮັກຊາດ, ຮັກມູນເຊື້ອອັນດີງາມຂອງຊາດ, ເປັນປັດໄຈຄ້ຳປະກັນການຍືນຍົງຄົງຕົວ ຂອງຊາດລາວຕະຫຼອດໄປ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ມໍລະດົກແຫ່ງຊາດ**

ມໍລະດົກແຫ່ງຊາດ ແມ່ນ ຜະລິດຕະພັນທີ່ມະນຸດສ້າງຂຶ້ນ ຫຼື ສິ່ງທີ່ເກີດຂຶ້ນໂດຍທຳມະຊາດ ທີ່ມີຄຸນຄ່າສູງທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ, ເປັນຊັບສົມບັດອັນລ້ຳຄ່າ, ເປັນກຳມະສິດລວມຂອງວົງຄະນາຍາດແຫ່ງຊາດລາວ ທີ່ມີຢູ່ທັງພາຍໃນ ແລະ ຕ່າງປະເທດ.

ມໍລະດົກແຫ່ງຊາດ ປະກອບດ້ວຍ ມໍລະດົກທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ທີ່ເປັນວັດຖຸ, ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ, ມີຊີວິດ ຫຼື ບໍ່ມີຊີວິດ ຊຶ່ງຢັ້ງຢືນເຖິງຄວາມເປັນມາຂອງຊາດລາວ, ຄົນລາວໃນແຕ່ລະຍຸກແຕ່ລະສະໄໝ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຮ່ອງຮອຍປະຫວັດສາດ** ໝາຍເຖິງ ສະຖານທີ່, ສິ່ງກໍ່ສ້າງທາງດ້ານ ສະຖາປັດຕະຍະກຳ, ບູຮານສະຖານ ຊຶ່ງມີວັດຖຸບູຮານ ທີ່ມີຄຸນຄ່າສູງ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ວິທະຍາສາດ;

2. **ສະຖາປັດຕະຍະກຳ** ໝາຍເຖິງ ສິ່ງກໍ່ສ້າງແຫ່ງສິລະປະທີ່ໂດດເດັ່ນທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕິດພັນກັບແບບແຜນດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ, ຂອງບັນພະບຸລຸດ ແລະ ວິລະບຸລຸດແຫ່ງຊາດ;

3. **ວັດຖຸບູຮານ** ໝາຍເຖິງ ຜະລິດຕະພັນທາງດ້ານວັດຖຸ ທີ່ສ້າງຂຶ້ນໂດຍມະນຸດອັນເປັນຫຼັກຖານຢັ້ງຢືນ ເຖິງປະຫວັດສາດແຫ່ງຂະບວນວິວັດຂອງສັງຄົມມະນຸດ;

4. **ແຫຼ່ງບູຮານວິທະຍາ** ໝາຍເຖິງ ສະຖານທີ່ ຊຶ່ງວັດຖຸບູຮານ, ສະຖານບູຮານ ແລະ ບັນດາຮ່ອງຮອຍຫຼັກຖານທາງປະຫວັດສາດ ຖືກຄົ້ນພົບຢູ່ຮ່ວມກັນເປັນກຸ່ມ;

5. **ວັດຖຸຈຳລອງແບບ** ໝາຍເຖິງ ວັດຖຸທີ່ສ້າງຂຶ້ນໃໝ່ ໂດຍການກ່າຍເອົາແບບວັດຖຸບູຮານ ຊຶ່ງມີລັກສະນະຮູບຊົງ, ສັດສ່ວນ, ສີສັນ, ລວດລາຍ, ການຕົບແຕ່ງ ແລະ ຈຸດພິເສດອື່ນ ຕາມແບບສະບັບເດີມ;

6. **ການປົກປັກຮັກສາມໍລະດົກແຫ່ງຊາດ** ໝາຍເຖິງ ການປ້ອງກັນບໍ່ໃຫ້ຖືກລັກ, ທຳລາຍ, ຈູດເຜົາ, ຖືກເສຍຫາຍຈາກທຳມະຊາດ ຫຼື ຖືກເອົາໄປນຳໃຊ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

7. **ການອະນຸລັກມໍລະດົກແຫ່ງຊາດ** ໝາຍເຖິງ ຂະບວນການ ແລະ ວິທີການຮັກສາໄວ້ ຊຶ່ງຄຸນຄ່າ, ຮ່ອງຮອຍ, ສີສັນທາງດ້ານ ວັດທະນະທຳ, ປະຫວັດສາດ, ທຳມະຊາດ ຂອງມໍລະດົກແຫ່ງຊາດ ເພື່ອບໍ່ໃຫ້ເສື່ອມໂຊມ ແລະ ສູນຫາຍ;

8. **ການບູລະນະ** ໝາຍເຖິງ ການສ້ອມແປງ ຫຼື ຟື້ນຟູສ່ວນໃດໜຶ່ງຂອງມໍລະດົກນັ້ນໆ ໂດຍຮັກສາຮູບແບບ, ລວດລາຍ, ສິລະປະ ແລະ ລາຍລະອຽດເດີມ ຂອງອາຄານສິ່ງກໍ່ສ້າງໃຫ້ຖືກຕ້ອງຕາມຍຸກສະໄໝ ທີ່ແນ່ນອນ ຊຶ່ງນຳໃຊ້ວັດສະດຸ ແລະ ວິທີການດັ້ງເດີມ ເພື່ອສ້ອມແຊມສ່ວນທີ່ຂາດຫາຍໄປໃຫ້ສົມບູນ;

9. **ການປະຕິສັງຂອນ** ໝາຍເຖິງ ຂະບວນການຕ່າງໆທີ່ລວມເອົາການບູລະນະສ້ອມແປງ ເພື່ອໃຫ້ວັດຖຸ ຫຼື ສິ່ງກໍ່ສ້າງດ້ານວັດທະນະທຳ, ປະຫວັດສາດ, ທັດສະນີຍະພາບທຳມະຊາດ ຄືນສູ່ສະພາບ ແລະ ເອກະລັກດັ້ງເດີມ ດ້ວຍການອີງຕາມຂໍ້ມູນຫຼັກຖານທາງປະຫວັດສາດທີ່ມີຢູ່;

10. **ມໍລະດົກສະຖານ** ໝາຍເຖິງ ບູຮານສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສະຖານທີ່ທຳມະຊາດ ແລະ ສະຖາປັດຕະຍະກຳ ຊຶ່ງມີຄຸນຄ່າທາງດ້ານ ວັດທະນະທຳ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ, ທັດສະນີຍະພາບທີ່ສືບທອດກັນມາ;

11. **ປູຊະນີຍະສະຖານ** ໝາຍເຖິງ ສະຖານທີ່ ຊຶ່ງເປັນບ່ອນເຄົາລົບບູຊາ ຂອງປະຊາຊົນ ທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດ;

12. **ອະນຸສອນສະຖານ** ໝາຍເຖິງ ສະຖານທີ່ລະນຶກເຖິງວິລະກຳຂອງບັນພະບຸລຸດ ແລະ ຂະບວນການຕໍ່ສູ້ອັນພິລະອາດຫານ ຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ເພື່ອຄວາມຊົງຈຳຂອງອະນຸຊົນຄົນຮຸ່ນຫຼັງ;

13. **ຊັບສົມບັດອັນລ້ຳຄ່າ** ໝາຍເຖິງ ຊັບສົມບັດທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ;

14. **ຄວາມຊົງຈຳຂອງໂລກ (Memory of the World)** ໝາຍເຖິງ ເຫດການໃດໜຶ່ງທີ່ເກີດຂຶ້ນ ແລະ ຖືກບັນທຶກໄວ້ ເພື່ອໃຫ້ຄົນຮຸ່ນຫຼັງໄດ້ຮັບຮູ້ ໂດຍມີການຂຶ້ນທະບຽນ, ອະນຸລັກ ແລະ ປົກປັກຮັກສາ ກ່ຽວກັບເຫດການທີ່ມີຄວາມສຳຄັນສູງທາງດ້ານມໍລະດົກວັດທະນະທຳ ແລະ ປະຫວັດສາດ ຂອງຊາດ, ຂອງພາກພື້ນ ແລະ ຂອງໂລກ ເພື່ອເກັບຮັກສາໄວ້ເປັນຄວາມຊົງຈຳຂອງມວນມະນຸດຊາດ;

15. **ເຄື່ອງຄ້ຳຂອງຄູນ** ໝາຍເຖິງ ວັດຖຸທີ່ມີຄຸນຄ່າທາງດ້ານຈິດໃຈ ຊຶ່ງເປັນສ່ວນໜຶ່ງຂອງຊັບສົມບັດອັນລ້ຳຄ່າ ທີ່ປວງຊົນລາວ ໃຫ້ຄວາມເຄົາລົບ ສັກກາລະບູຊາ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານມໍຣະດົກແຫ່ງຊາດ**

ລັດ ສົ່ງເສີມ ແລະ ຖືເປັນບຸລິມະສິດຕໍ່ວຽກງານມໍຣະດົກແຫ່ງຊາດ ດ້ວຍການປົກປັກຮັກສາ, ອະນຸລັກມໍຣະດົກແຫ່ງຊາດ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີທັນສະໄໝ.

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂ ອໍານວຍຄວາມສະດວກໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມໃນການສະໜອງຂໍ້ມູນ ຂ່າວສານ, ປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນ ແລະ ຟື້ນຟູ ມໍຣະດົກແຫ່ງຊາດ ເພື່ອໃຫ້ມີຄວາມຍືນຍົງຄົງຕົວ.

ລັດ ສົ່ງເສີມ ການຄົ້ນຄວ້າ, ການປະດິດຄິດແຕ່ງ, ການເຜີຍແຜ່ຄຸນຄ່າ ທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າຂອງມໍຣະດົກແຫ່ງຊາດ ພ້ອມທັງຈໍາກັດ, ແກ້ໄຂສິ່ງກີດໜ່ວງຖ່ວງດຶງ ຄວາມກ້າວໜ້າຂອງປະຊາຊົນລາວບັນດາເຜົ່າ ແລະ ຂອງປະເທດຊາດ.

ລັດ ຮັບຮູ້ ແລະ ປົກປ້ອງກໍາມະສິດ ກ່ຽວກັບມໍຣະດົກແຫ່ງຊາດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານມໍຣະດົກແຫ່ງຊາດ**

ການເຄື່ອນໄຫວວຽກງານມໍຣະດົກແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ການສຶກສາ, ສໍາຫຼວດ, ຂຸດຄົ້ນ, ເກັບກູ້, ກອບກູ້, ຄົ້ນຄວ້າວິໄຈ, ການປະດິດຄິດແຕ່ງ, ຂຶ້ນທະບຽນ, ການໂຄສະນາ ເຜີຍແຜ່ ຕ້ອງຮັບປະກັນຄວາມຍືນຍົງຄົງຕົວຂອງມໍຣະດົກແຫ່ງຊາດ, ເປັນກໍາລັງດັນ ໃນການພັດທະນາປະເທດຊາດ ໃຫ້ຮັ່ງມີ, ເຂັ້ມແຂງ ສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

2. ການຄຸ້ມຄອງ, ປົກປັກຮັກສາ ແລະ ອະນຸລັກມໍຣະດົກແຫ່ງຊາດ ຕ້ອງໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

3. ການບູລະນະ, ປະຕິສັງຂອນ ແລະ ຟື້ນຟູ ມໍຣະດົກແຫ່ງຊາດ ຕ້ອງຮັບປະກັນລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ ພ້ອມທັງຈໍາກັດ, ແກ້ໄຂສິ່ງກີດໜ່ວງຖ່ວງດຶງຄວາມກ້າວໜ້າ ຂອງປະຊາຊົນລາວບັນດາເຜົ່າ ແລະ ຂອງປະເທດຊາດ;

4. ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ໃຫ້ມີຄວາມຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;

5. ການຮັກສາ ແລະ ເສີມຂະຫຍາຍຄຸນຄ່າຂອງມໍຣະດົກແຫ່ງຊາດ ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນເສດຖະກິດ.

**ມາດຕາ 6 (ປັບປຸງ) ພັນທະຂອງພົນລະເມືອງ**

ພົນລະເມືອງລາວ ແລະ ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສ ຢູ່ ສປປ ລາວ ລ້ວນແຕ່ມີພັນທະໃນການປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນ ມໍຣະດົກແຫ່ງຊາດ ໃຫ້ມີຄວາມຍືນຍົງຄົງຕົວ.

ຄົນຕ່າງປະເທດ, ນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ລວມທັງຄົນລາວ ຢູ່ ຕ່າງປະເທດ ກໍມີພັນທະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ອະນຸລັກ ມໍຣະດົກແຫ່ງຊາດ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ຄົ້ນຄວ້າວິທະຍາສາດ, ຝຶກອົບຮົມວິຊາການ, ເຜີຍແຜ່ວັດທະນະທຳ, ວາງສະແດງ, ຍາດແຍ່ງທຶນຮອນ, ການຄົ້ນຄວ້າຂຶ້ນທະບຽນມໍລະດົກລະດັບພາກພື້ນ ແລະ ລະດັບໂລກ ຮ່ວມກັນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດມໍລະດົກແຫ່ງຊາດ
### ໝວດທີ 1
### ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ

**ມາດຕາ 9 (ໃໝ່) ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແມ່ນ ມໍລະດົກທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ສິລະປະ, ພູມປັນຍາ, ວິທະຍາສາດ ຊຶ່ງເປັນສົມບັດຂອງຊາດ ແລະ ໄດ້ຮັບການສືບທອດກັນມາແຕ່ລະຍຸກແຕ່ລະສະໄໝ.

**ມາດຕາ 10 ປະເພດມໍລະດົກແຫ່ງຊາດທາງດ້ານວັດທະນະທຳ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ມີ ສອງປະເພດ ຄື:

1. ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ທີ່ເປັນວັດຖຸ;
2. ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ທີ່ບໍ່ເປັນວັດຖຸ.

**ມາດຕາ 11 ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ເປັນວັດຖຸ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ເປັນວັດຖຸ ແມ່ນ ມໍລະດົກທີ່ມີຕົວຕົນ, ເປັນຊັບສົມບັດອັນລ້ຳຄ່າທາງດ້ານວັດທະນະທຳ ທີ່ເປັນເອກະລັກ ເປັນຕົ້ນ ເຄື່ອງມືການຜະລິດ, ເຄື່ອງຫັດຖະກຳ, ເຄື່ອງອຸປະໂພກ, ບໍລິໂພກ, ສິລະປະວັດຖຸ, ເຄື່ອງດົນຕີພື້ນເມືອງ, ສິ່ງຈາລຶກບູຮານ, ວັດຖຸບູຮານ, ບູຮານສະຖານ, ປູຊະນີຍະສະຖານ.

**ມາດຕາ 12 (ປັບປຸງ) ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ ແມ່ນ ມໍລະດົກທີ່ບໍ່ມີຕົວຕົນ, ເປັນຊັບສົມບັດອັນລ້ຳຄ່າທາງດ້ານວັດທະນະທຳ ເຊັ່ນ ພູມປັນຍາ, ຄວາມຮູ້, ປັດຊະຍາຂອງມະຫາຊົນ, ຄວາມເຊື່ອຖື, ຮີດຄອງປະເພນີອັນດີງາມ ຊຶ່ງສະແດງອອກໃນວິຖີຊີວິດ, ມາລະຍາດໃນສັງຄົມ, ພາສາ, ຕົວອັກສອນ, ຕົວເລກ, ພື້ນແຜ່ນ, ໜັງສືຜູກໃບລານ, ຕຳນານ, ນິທານ, ສຸພາສິດ, ກາບກອນ, ສຽງດົນຕີພື້ນເມືອງ, ບົດຟ້ອນພື້ນເມືອງ, ສຽງຮ້ອງ, ທຳນອງເພງ, ຂັບລຳ, ຕຳລາຢາພື້ນເມືອງ ແລະ ມໍລະດົກອື່ນ ທີ່ບໍ່ເປັນວັດຖຸ ຊຶ່ງໄດ້ສືບທອດກັນມາ.

## ໝວດທີ 2
## ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ

**ມາດຕາ 13 (ໃໝ່) ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ**

ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ ແມ່ນ ມໍລະດົກທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີຄຸນຄ່າສູງທາງດ້ານປະຫວັດສາດ, ການຕໍ່ສູ້ທາງດ້ານການເມືອງ, ການທະຫານ ກ່ຽວກັບສິລະປະວັດຖຸ ຊຶ່ງເປັນສົມບັດຂອງຊາດ ແລະ ໄດ້ຮັບການສືບທອດ ກັນມາແຕ່ລະຍຸກແຕ່ລະສະໄໝ.

**ມາດຕາ 14 ປະເພດມໍລະດົກແຫ່ງຊາດທາງດ້ານປະຫວັດສາດ**

ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ ມີ ສອງປະເພດ ຄື:

1. ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ ທີ່ເປັນວັດຖຸ;
2. ມໍລະດົກແຫ່ງຊາດທາງດ້ານປະຫວັດສາດ ທີ່ບໍ່ເປັນວັດຖຸ.

**ມາດຕາ 15 (ປັບປຸງ) ມໍລະດົກແຫ່ງຊາດທາງດ້ານປະຫວັດສາດທີ່ເປັນວັດຖຸ**

ມໍລະດົກແຫ່ງຊາດທາງດ້ານປະຫວັດສາດທີ່ເປັນວັດຖຸ ແມ່ນ ມໍລະດົກທີ່ມີຕົວຕົນ, ເປັນຊັບສົມບັດອັນລ້ຳຄ່າທາງດ້ານປະຫວັດສາດ ຫຼື ຄວາມຊົງຈຳຂອງໂລກ ເປັນຕົ້ນ ຖ້ຳ, ໂຮງ, ອາວຸດຍຸດໂທປະກອນ, ພາຫະນະ, ເຄື່ອງອຸປະໂພກ, ເຄື່ອງບໍລິໂພກ, ເອກະສານ ທີ່ໄດ້ບັນທຶກໄວ້, ສະຖານທີ່ປະຫວັດສາດ ເຊັ່ນ ສະໜໍລະພູມ, ອະນຸສອນສະຖານ, ຖານທີ່ໝັ້ນຂອງຂະບວນການຕໍ່ສູ້ຮັກຊາດ ຂອງປະຊາຊົນລາວບັນດາເຜົ່າ, ວິລະຊົນ, ນັກຮົບແຂ່ງຂັນ, ບັນພະບຸລຸດ ແລະ ຜູ້ນຳການປະຕິວັດ.

**ມາດຕາ 16 ມໍລະດົກແຫ່ງຊາດທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ**

ມໍລະດົກແຫ່ງຊາດທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ ແມ່ນ ມໍລະດົກທາງດ້ານຈິດໃຈ ທີ່ຕິດພັນກັບປະຫວັດສາດ ໃນແຕ່ລະຍຸກແຕ່ລະສະໄໝ ເປັນຕົ້ນ ແນວຄິດ, ທັດສະດີ, ອຸດົມການ ຊຶ່ງສະແດງເຖິງມູນເຊື້ອຮັກຊາດ, ພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນ, ພູມປັນຍາ, ຄວາມຮູ້, ຄວາມສາມາດ, ຍຸດທະສາດ, ສິລະປະຍຸດ, ຍຸດທະວິທີ, ບົດຮຽນໃນການຕໍ່ສູ້, ການນຳພາ, ການປົກຄອງ ແລະ ການສ້າງສາພັດທະນາປະເທດຊາດ ເຊັ່ນ ການຕໍ່ສູ້ກູ້ຊາດຂອງແນວລາວຮັກຊາດ ທີ່ໄດ້ເປັນຄວາມຊົງຈຳຂອງໂລກລະດັບພາກພື້ນ.

## ໝວດທີ 3
## ມໍລະດົກແຫ່ງຊາດທາງດ້ານທຳມະຊາດ

**ມາດຕາ 17 (ໃໝ່) ມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແມ່ນ ມໍລະດົກທີ່ເກີດຂຶ້ນໂດຍທຳມະຊາດ ທີ່ມີຊີວິດ ຫຼື ບໍ່ມີຊີວິດ ຊຶ່ງມີຄຸນຄ່າສູງທາງດ້ານ ທັດສະນີຍະພາບ, ນິເວດວິທະຍາ, ວິທະຍາສາດ ແລະ ຊີວະນາໆພັນ ທີ່ຍັງຄົງຄວາມສົມບູນທາງທຳມະຊາດ ແລະ ຄວາມສວຍສົດງົດງາມ.

**ມາດຕາ 18 ປະເພດມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ມີ ສອງປະເພດ ຄື:

1. ມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານທັດສະນີຍະພາບ;
2. ມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ ແລະ ວິທະຍາສາດ.

**ມາດຕາ 19 ມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານທັດສະນີຍະພາບ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານທັດສະນີຍະພາບ ແມ່ນ ມໍລະດົກທີ່ມີຄວາມສວຍງາມອັນໂດດເດັ່ນ, ອຸດົມສົມບູນໄປດ້ວຍຊີວະນາໆພັນ ເປັນຕົ້ນ ປ່າສະຫງວນ, ເຂດອະນຸລັກຊີວະນາໆພັນ, ຖ້ຳທຳມະຊາດ, ພູ, ຜາ, ນ້ຳຕົກຕາດ, ແກ້ງ, ດອນ, ແມ່ນ້ຳ, ລຳເຊ, ເກາະດອນ, ຫ້ວຍ, ໜອງ, ຄອງ, ບຶງ, ພືດ, ສັດ.

**ມາດຕາ 20 ມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ ແລະ ວິທະຍາສາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ ແລະ ວິທະຍາສາດ ແມ່ນ ມໍລະດົກອັນລ້ຳຄ່າທາງດ້ານທຳມະຊາດ ທີ່ມີຄວາມສຳຄັນ, ໂດດເດັ່ນທາງດ້ານທໍລະນີສາດ, ຊີວະສາດ ແລະ ພູມສາດ ເປັນຕົ້ນ ແຮ່ທາດ, ພືດ, ສັດ, ພູ, ຜາ, ປ່າໄມ້.

## ພາກທີ III
## ລະດັບມໍລະດົກແຫ່ງຊາດ ແລະ ສົມບັດມີ່ງເມືອງ

### ໝວດທີ 1
### ລະດັບມໍລະດົກແຫ່ງຊາດ

**ມາດຕາ 21 (ປັບປຸງ) ລະດັບມໍລະດົກແຫ່ງຊາດ**

ມໍລະດົກແຫ່ງຊາດ ມີ ສີ່ລະດັບດັ່ງນີ້:

1. ລະດັບທ້ອງຖິ່ນ;
2. ລະດັບຊາດ;
3. ລະດັບພາກພື້ນ;
4. ລະດັບໂລກ.

ສຳລັບເງື່ອນໄຂ, ມາດຕະຖານ ແລະ ຂັ້ນຕອນການຈັດລະດັບມໍລະດົກແຫ່ງຊາດ ແຕ່ລະດັບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ມໍລະດົກແຫ່ງຊາດລະດັບທ້ອງຖິ່ນ**

ມໍລະດົກແຫ່ງຊາດລະດັບທ້ອງຖິ່ນ ແມ່ນ ມໍລະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບທ້ອງຖິ່ນ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຊຶ່ງເກີດຂຶ້ນ ຫຼື ຕັ້ງຢູ່ໃນພື້ນທີ່ຂອງທ້ອງຖິ່ນ.

**ມາດຕາ 23 ມໍລະດົກແຫ່ງຊາດລະດັບຊາດ**

ມໍລະດົກແຫ່ງຊາດລະດັບຊາດ ແມ່ນ ມໍລະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບຊາດທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຊຶ່ງເກີດຂຶ້ນ ຫຼື ຕັ້ງຢູ່ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ທີ່ເປັນມໍລະດົກຂອງວິງສາຄະນາຍາດແຫ່ງຊາດ.

**ມາດຕາ 24 ມໍຣະດົກແຫ່ງຊາດລະດັບພາກພື້ນ**

ມໍຣະດົກແຫ່ງຊາດລະດັບພາກພື້ນ ແມ່ນ ມໍຣະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບພາກພື້ນ ທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ຊຶ່ງເກີດຂຶ້ນ ແລະ ຕັ້ງຢູ່ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ໂດຍໄດ້ຮັບການຮັບຮອງຈາກອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທໍາ ປະຈໍາພາກພື້ນ.

**ມາດຕາ 25 ມໍຣະດົກແຫ່ງຊາດລະດັບໂລກ**

ມໍຣະດົກແຫ່ງຊາດລະດັບໂລກ ແມ່ນ ມໍຣະດົກຂອງລາວທີ່ມີຄຸນຄ່າອັນໂດດເດັ່ນລະດັບໂລກ ທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ຊຶ່ງເກີດຂຶ້ນ ແລະ ຕັ້ງຢູ່ໃນພື້ນທີ່ໃດໜຶ່ງ ຂອງ ສປປ ລາວ ໂດຍໄດ້ຮັບການຮັບຮອງຈາກອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທໍາ ເຊັ່ນ ຕົວເມືອງເກົ່າຫຼວງພະບາງ, ພູມີທັດວັດພູຈໍາປາສັກ, ແຫຼ່ງໄຫຫີນຊຽງຂວາງ, ສຽງແຄນເຊື້ອຊາດລາວ.

## ໝວດທີ 2
## ສົມບັດມິ່ງເມືອງ

**ມາດຕາ 26 (ປັບປຸງ) ສົມບັດມິ່ງເມືອງ**

ສົມບັດມິ່ງເມືອງ ແມ່ນ ມໍຣະດົກແຫ່ງຊາດທາງດ້ານ ວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ທີ່ມີຄຸນຄ່າສູງ, ໂດດເດັ່ນ, ຫາຍາກ, ເປັນເອກະລັກຂອງຊາດ ແລະ ເປັນທີ່ສັກກາລະບູຊາຂອງປະຊາຊົນລາວບັນດາເຜົ່າ ຊຶ່ງຕ້ອງໄດ້ເອົາໃຈໃສ່ປົກປັກຮັກສາ, ອະນຸລັກ ໃຫ້ໝັ້ນຄົງຢູ່ຄູ່ບ້ານຄູ່ເມືອງ.

**ມາດຕາ 27 (ປັບປຸງ) ປະເພດສົມບັດມິ່ງເມືອງ**

ສົມບັດມິ່ງເມືອງ ມີທັງປະເພດທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ເຊັ່ນ ພຣະບາງ, ພຣະອົງຕື້, ພຣະມ່ານ, ພຣະທາດຫຼວງວຽງຈັນ, ຫໍພຣະແກ້ວ, ວັດສີສະເກດ, ວັດຊຽງທອງ, ສຽງແຄນເຊື້ອຊາດລາວ, ຮີດສິບສອງ ຄອງສິບສີ່, ວັນນະກໍາສັງສິນໄຊ, ຄໍາພະຫຍາ, ໜັງສືຜູກໃບລານ, ຕໍານານນິທານພື້ນບ້ານພູທ້າວ ພູນາງ ແລະ ອື່ນໆ.

# ພາກທີ IV

# ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ, ການບູລະນະ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ

## ໝວດທີ 1

## ການຄຸ້ມຄອງມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 28 (ປັບປຸງ) ການຄຸ້ມຄອງ**

ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ໃນຂອບເຂດທົ່ວປະເທດ ໄດ້ຮັບການຄຸ້ມຄອງ ດ້ວຍການຂຶ້ນທະບຽນ ແລະ ການແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ, ທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ລັດ ຄຸ້ມຄອງ, ປົກປ້ອງ ກຳມະສິດ ຫຼື ລິຂະສິດ ຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນປະເທດ.

ການຄຸ້ມຄອງມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ດຳເນີນດ້ວຍການຂຶ້ນທະບຽນ ແລະ ການຈຳລອງແບບ, ການສ້າງໃໝ່, ການວາງສະແດງ, ການຄົ້ນຄວ້າວິໄຈ, ການສົ່ງອອກເພື່ອການວິໄຈ, ການນຳເຂົ້າ, ການໂຄສະນາ, ການເຜີຍແຜ່ ຫຼື ການຈຳໜ່າຍ, ການໂອນ, ການຊື້ ຂາຍ ແລະ ການສືບທອດ.

**ມາດຕາ 29 (ປັບປຸງ) ການຂຶ້ນທະບຽນ**

ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໄວ້ໃນຄອບຄອງ ຕ້ອງໄດ້ຂຶ້ນທະບຽນ.

ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ຕ້ອງມີອາຍຸແຕ່ ຫ້າສິບປີ ຂຶ້ນໄປ. ສຳລັບທາງດ້ານປະຫວັດສາດ ທີ່ໄດ້ຮັບການຂຶ້ນທະບຽນ ຕ້ອງແມ່ນເຫດການເຄື່ອນໄຫວໃນອະດີດແຕ່ລະໄລຍະ ເຊັ່ນ ປະຫວັດສາດການຕໍ່ສູ້ກູ້ຊາດ, ປະຫວັດສາດພັກ, ປະຫວັດການເຄື່ອນໄຫວອະດີດການນຳຂັ້ນສູງ ພັກ-ລັດ ແລະ ປະຊາຊົນ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ລັດ ດຳເນີນການຊອກຄົ້ນ, ເກັບກຳມໍລະດົກປະເພດຕ່າງໆ ເພື່ອປະເມີນຄຸນຄ່າ, ຈັດແບ່ງລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນ ກໍຊຸກຍູ້ໃຫ້ຜູ້ຄອບຄອງມໍລະດົກ ສະເໜີຂຶ້ນທະບຽນ ດັ່ງນີ້:

1. ມໍລະດົກແຫ່ງຊາດລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນ ນຳພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
2. ມໍລະດົກແຫ່ງຊາດລະດັບຊາດ ໃຫ້ຂຶ້ນທະບຽນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
3. ມໍລະດົກແຫ່ງຊາດລະດັບພາກພື້ນ ແລະ ລະດັບໂລກ ໃຫ້ຂຶ້ນທະບຽນນຳອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງຕາມການສະເໜີຂອງລັດຖະບານ ແຫ່ງ ສປປ ລາວ;

4. ມໍຣະດົກແຫ່ງຊາດລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ ທີ່ມີຄຸນຄ່າສູງ, ຫາຍາກ ແລະ ເປັນເອກະລັກຂອງຊາດທີ່ໄດ້ຮັບການຄົ້ນຄວ້າ ແລະ ຢັ້ງຢືນແລ້ວ ໃຫ້ສະເໜີຂຶ້ນທະບຽນກຳມະສິດ ແລະ ລິຂະສິດ ນຳອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ;

ມໍຣະດົກແຫ່ງຊາດ ທີ່ຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ມໍຣະດົກແຫ່ງຊາດທີ່ເປັນສົມບັດມີ່ງເມືອງ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພາຍຫຼັງຂຶ້ນທະບຽນແລ້ວ ລັດຈະຮັບຮູ້ມໍຣະດົກດັ່ງກ່າວ ເປັນມໍລະດົກແຫ່ງຊາດພ້ອມທັງຮັບຮູ້ສິດຄອບຄອງເຈົ້າຂອງມໍຣະດົກ, ຖ້າຫາກມໍຣະດົກນັ້ນ ບໍ່ໄດ້ຂຶ້ນທະບຽນ ເຈົ້າຂອງມໍຣະດົກ ຈະບໍ່ມີສິດດຳເນີນກິດຈະການຕ່າງໆ ກ່ຽວກັບມໍຣະດົກດັ່ງກ່າວ.

ການຂຶ້ນທະບຽນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍື່ນຄຳຮ້ອງຂໍຂຶ້ນທະບຽນ;
2. ການພິຈາລະນາການຂຶ້ນທະບຽນ;
3. ການເກັບຮັກສາເອກະສານຂຶ້ນທະບຽນ;
4. ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ.

**ມາດຕາ 30 ການຍື່ນຄຳຮ້ອງຂໍຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍຂຶ້ນທະບຽນ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຜ່ານອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ສຳລັບເຂດຫ່າງໄກສອກຫຼີກຈາກຕົວເມືອງ ໃຫ້ຍື່ນຕໍ່ອົງການປົກຄອງບ້ານບ່ອນຕົນອາໄສຢູ່.

**ມາດຕາ 31 ການພິຈາລະນາການຂຶ້ນທະບຽນ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວທີ່ກ່ຽວຂ້ອງ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ຄຳຮ້ອງຂໍຂຶ້ນທະບຽນ ແລະ ການຂຶ້ນທະບຽນນັ້ນ ໃຫ້ປະຕິບັດຕາມລະບຽບການຂຶ້ນທະບຽນ ຊຶ່ງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ວາງອອກ.

**ມາດຕາ 32 (ປັບປຸງ) ການເກັບຮັກສາເອກະສານຂຶ້ນທະບຽນ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ເກັບຮັກສາເອກະສານຂຶ້ນທະບຽນ ກ່ຽວກັບມໍຣະດົກແຫ່ງຊາດ ໂດຍເກັບມ້ຽນໃນຖານຂໍ້ມູນ ຫຼື ຫ້ອງເກັບມ້ຽນໄວ້ສະເພາະ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍ.

**ມາດຕາ 33 ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານການຂຶ້ນທະບຽນ**

ບຸກຄົນໃດທີ່ເຫັນວ່າ ການຂຶ້ນທະບຽນນັ້ນ ບໍ່ຖືກຕ້ອງແລ້ວ ກໍມີສິດຮ້ອງຂໍຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນອາໄສຢູ່ ເພື່ອໃຫ້ປ່ຽນແປງ ຫຼື ລຶບລ້າງ. ໃນກໍລະນີຂະແໜງການດັ່ງກ່າວ ຫາກບໍ່ພິຈາລະນາ ບຸກຄົນນັ້ນກໍມີສິດຮ້ອງຂໍຕໍ່ສານປະຊາຊົນ ເພື່ອໃຫ້ປ່ຽນແປງ ຫຼື ລຶບລ້າງການຂຶ້ນທະບຽນດັ່ງກ່າວ.

ສຳລັບການຂຶ້ນທະບຽນທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງ ບຸກຄົນອື່ນນັ້ນ ບຸກຄົນດັ່ງກ່າວກໍມີສິດຂໍຄັດຄ້ານການຂຶ້ນທະບຽນ ເພື່ອໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາ ຕາມກົດໝາຍ.

ໃນກໍລະນີຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຫາກເຫັນວ່າການຂຶ້ນທະບຽນຂອງຕົນບໍ່ຖືກຕ້ອງ ກໍມີສິດປ່ຽນແປງ ຫຼື ລຶບລ້າງໂດຍໜ້າທີ່ໄດ້ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ພົບເຫັນ ເປັນຕົ້ນໄປ.

ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ ໃຫ້ພິຈາລະນາພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ມາດຕາ 34 (ປັບປຸງ) ການຈຳລອງແບບ**

ການຈຳລອງແບບ ແມ່ນ ການສ້າງວັດຖຸໃໝ່ຂຶ້ນ ດ້ວຍການກ່າຍເອົາ ແບບ, ສີສັນ, ລວດລາຍ ຂອງມໍລະດົກດັ້ງເດີມ.

ການຈຳລອງແບບ ຕ້ອງກຳນົດ ຂະໜາດ, ສັດສ່ວນ, ສີສັນ, ລວດລາຍ, ຮູບຮ່າງ ແລະ ລັກສະນະທີ່ຄ້າຍຄືມໍລະດົກດັ້ງເດີມຫຼາຍທີ່ສຸດ ແລະ ຕ້ອງໄດ້ໃສ່ເຄື່ອງໝາຍຂອງວັດຖຸຈຳລອງນັ້ນ.

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງ ຈຳລອງແບບມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ສຳລັບຮູບແບບ, ຂັ້ນຕອນການອະນຸຍາດ ລວມທັງສິດ ແລະ ພັນທະຂອງຜູ້ຈຳລອງແບບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 35 ການສ້າງໃໝ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງ, ປັ້ນຫຼໍ່ ສິ່ງໃໝ່ລະດັບຊາດ ເຊັ່ນ ອານຸສາວະລີ, ບັນພະບຸລຸດ, ຜູ້ນຳ, ວິລະຊົນແຫ່ງຊາດ, ສາສະນະສະຖານ, ພຣະພຸດທະຮູບ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

ສຳລັບການສ້າງ ແລະ ການປັ້ນຫຼໍ່ ສິ່ງໃໝ່ລະດັບທ້ອງຖິ່ນ ລວມທັງການປັ້ນຫຼໍ່ຮູບອະນຸສອນຂອງຕະກຸນສ່ວນບຸກຄົນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 36 (ປັບປຸງ) ການວາງສະແດງ**

ການວາງສະແດງມໍລະດົກແຫ່ງຊາດ ມີ ສາມປະເພດ ຕົ້ນຕໍ ດັ່ງນີ້:

1. ການວາງສະແດງ ເພື່ອເຜີຍແຜ່ໃຫ້ມວນຊົນເຂົ້າຊົມ;
2. ການວາງສະແດງ ເພື່ອໃຫ້ມີການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ການບູລະນະປະຕິສັງຂອນ;
3. ການວາງສະແດງ ເພື່ອການຄ້າ.

ການວາງສະແດງມໍລະດົກແຫ່ງຊາດ ອາດຈະດຳເນີນຢູ່ພາຍໃນ ຫຼື ຢູ່ຕ່າງປະເທດ.

ການວາງສະແດງມໍລະດົກແຫ່ງຊາດ ຢູ່ພາຍໃນປະເທດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພາຍຫຼັງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ສຳລັບການວາງສະແດງມໍລະດົກແຫ່ງຊາດ ຢູ່ຕ່າງປະເທດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ພາຍຫຼັງໄດ້ສຳເລັດການວາງສະແດງແລ້ວ ຕ້ອງນຳເອົາມໍລະດົກແຫ່ງຊາດດັ່ງກ່າວ ກັບຄືນປະເທດໃນສະພາບເດີມ.

**ມາດຕາ 37 (ປັບປຸງ) ການຄົ້ນຄວ້າ, ວິໄຈ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດໄດ້ຮັບການສົ່ງເສີມ ໃຫ້ດຳເນີນການຄົ້ນຄວ້າ, ວິໄຈ ກ່ຽວກັບມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ດ້ວຍນະໂຍບາຍຕ່າງໆ ຕາມກົດໝາຍ.

ການຄົ້ນຄວ້າ, ວິໄຈ ກ່ຽວກັບມໍຣະດົກແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຮ່ວມມືກັບຕ່າງປະເທດ ໃນການຄົ້ນຄວ້າ, ວິໄຈ ກ່ຽວກັບມໍຣະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຂໍ້ມູນ ແລະ ຜົນຂອງການຄົ້ນຄວ້າ, ວິໄຈ ຕ້ອງມອບຕົ້ນສະບັບໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງເພື່ອເກັບຮັກສາໄວ້ ແລະ ໂຄສະນາ ເຜີຍແຜ່ ຕາມລະບຽບການ.

**ມາດຕາ 38 (ປັບປຸງ) ການສົ່ງອອກ ເພື່ອການວິໄຈ**

ການສົ່ງອອກຊິ້ນສ່ວນວັດຖຸ ທີ່ເປັນມໍຣະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ເພື່ອການວິໄຈ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ການສົ່ງອອກຊິ້ນສ່ວນວັດຖຸທີ່ເປັນມໍຣະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ມີຄຸນຄ່າສູງ ແລະ ຫາຍາກ ເພື່ອການວິໄຈ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຕ້ອງໄດ້ນຳເອົາຊິ້ນສ່ວນວັດຖຸດັ່ງກ່າວ ພ້ອມດ້ວຍຜົນຂອງການວິໄຈກັບຄືນປະເທດພາຍໃນເວລາ ສາມປີ ນັບແຕ່ວັນໄດ້ຮັບອະນຸຍາດສົ່ງອອກ.

**ມາດຕາ 39 (ປັບປຸງ) ການນຳເຂົ້າ, ໂຄສະນາ ເຜີຍແຜ່ ຫຼື ຈຳໜ່າຍ**

ການນຳເຂົ້າ, ໂຄສະນາ ເຜີຍແຜ່, ຈຳໜ່າຍແບບ, ແມ່ພິມ ແລະ ຜະລິດຕະພັນ ທາງດ້ານວັດທະນະທຳ ຂອງຕ່າງປະເທດ ຕ້ອງໄດ້ຮັບການກວດກາ ແລະ ອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ບໍ່ອະນຸຍາດໃຫ້ນຳເຂົ້າຜະລິດຕະພັນທາງດ້ານວັດທະນະທຳ ຂອງຕ່າງປະເທດ ທີ່ເປັນວັດຖຸຈຳລອງແບບ ທີ່ບໍ່ສອດຄ່ອງກັບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ.

**ມາດຕາ 40 (ປັບປຸງ) ການໂອນ**

ມໍຣະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດໂອນກຳມະສິດ, ລິຂະສິດ ໃຫ້ຜູ້ອື່ນພາຍໃນປະເທດໄດ້ ແຕ່ຕ້ອງແຈ້ງໃຫ້ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນຂຶ້ນທະບຽນ ແລະ ດຳເນີນການໂອນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 41 (ປັບປຸງ) ການຊື້ ຂາຍ, ແລກປ່ຽນ**

ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນກຳມະສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກມີຈຸດປະສົງຊື້ ຂາຍ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ໃນກໍລະນີມໍຣະດົກແຫ່ງຊາດນັ້ນຫາກມີຄຸນຄ່າສູງ, ໂດດເດັ່ນ ລັດ ມີບຸລິມະສິດຊື້ເອົາມໍຣະດົກດັ່ງກ່າວ ຕາມລາຄາທີ່ຕົກລົງກັນ.

ລັດ ບໍ່ອະນຸຍາດໃຫ້ຊື້ ຂາຍ ມໍຣະດົກແຫ່ງຊາດ ອອກນອກປະເທດ.

ມໍຣະດົກແຫ່ງຊາດ, ວັດຖຸບູຮານ ບໍ່ສາມາດມອບເປັນຂອງຂວັນໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ່າງປະເທດໄດ້.

ສໍາລັບການແລກປ່ຽນ ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ ລະຫວ່າງປະເທດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ບົນພື້ນຖານການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

**ມາດຕາ 42 (ປັບປຸງ) ການສືບທອດ**

ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດສືບທອດ, ມອບໂອນໃຫ້ຜູ້ອື່ນໄດ້ ແຕ່ກ່ອນຈະດໍາເນີນການໂອນໃຫ້ຜູ້ສືບທອດ ຕ້ອງໄດ້ຂໍອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ບ່ອນທີ່ຂຶ້ນທະບຽນນັ້ນ.

ໃນກໍລະນີທີ່ມີຫຼາຍຄົນ ໄດ້ຮັບການສືບທອດຮ່ວມກັນ ຕ້ອງມອບສິດເປັນລາຍລັກອັກສອນໃຫ້ຜູ້ໃດຜູ້ໜຶ່ງ ເປັນຕົວແທນ.

## ໝວດທີ 2
## ການນໍາໃຊ້ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ

**ມາດຕາ 43 ການນໍາໃຊ້**

ການນໍາໃຊ້ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ ຕ້ອງໃຫ້ຖືກຕ້ອງຕາມຈຸດປະສົງ, ໃຫ້ມີປະສິດທິຜົນ, ຮັກສາສະຖານະພາບເດີມ ແລະ ຍືນຍົງ ໂດຍນໍາໃຊ້ລາຍຮັບທີ່ໄດ້ມາຈາກມໍຣະດົກແຫ່ງຊາດນັ້ນ ເຂົ້າໃນການພັດທະນາວຽກງານມໍຣະດົກແຫ່ງຊາດ.

**ມາດຕາ 44 (ປັບປຸງ) ເປົ້າໝາຍການນໍາໃຊ້**

ການນໍາໃຊ້ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ ມີ ເປົ້າໝາຍ ດັ່ງນີ້:

1. ໃຫ້ເປັນພື້ນຖານ ແຫ່ງຄວາມຍືນຍົງຄົງຕົວ ແລະ ໝັ້ນຄົງ ຂອງຊາດ, ເປັນກໍາລັງດັນໃຫ້ສັງຄົມຂະຫຍາຍຕົວ ທັງແມ່ນຈຸດໝາຍຂອງການພັດທະນາປະເທດຊາດ ໃຫ້ຮັ່ງມີ, ເຂັ້ມແຂງ;

2. ສຶກສາອົບຮົມພົນລະເມືອງ ໃຫ້ມີນໍ້າໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈ ຕໍ່ມູນເຊື້ອຂະຫຍັນໝັ່ນພຽນ, ປະດິດສ້າງ, ຕໍ່ສູ້ພິລະອາດຫານ, ສາມັກຄີເປັນປຶກແຜ່ນຂອງປະຊາຊົນລາວບັນດາເຜົ່າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;

3. ເພີ່ມທະວີຄັງສາງມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ ໃຫ້ອຸດົມຮັ່ງມີ;

4. ສົ່ງເສີມອຸດສາຫະກໍາການທ່ອງທ່ຽວ;

5. ເຊື່ອມໂຍງເຂົ້າກັບການນໍາໃຊ້ມໍຣະດົກ ທາງດ້ານ ວັດທະນະທໍາ ແລະ ປະຫວັດສາດຂອງພາກພື້ນ ແລະ ສາກົນ;

6. ຄົ້ນຄວ້າ, ວິໄຈ ທາງດ້ານບູຮານວິທະຍາ, ປະຫວັດສາດ ແລະ ອື່ນໆ.

## ໝວດທີ 3
## ການປົກປັກຮັກສາ, ການອະນຸລັກ, ການບູລະນະ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 45 ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນວັດຖຸ**

ໃນການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນວັດຖຸ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງຄາດຄະເນຜົນເສຍຫາຍທີ່ຈະເກີດຂຶ້ນແກ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ພ້ອມທັງມີມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ;

2. ການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະການພັດທະນາອຸດສາຫະກຳ, ກະສິກຳ, ພື້ນຖານໂຄງລ່າງໃນເຂດທີ່ມີ ຫຼື ສົງໄສວ່າມີມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກກະຊວງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງມີມາດຕະການ ເພື່ອປົກປັກຮັກສາມໍລະດົກແຫ່ງຊາດດັ່ງກ່າວ ບໍ່ໃຫ້ເສຍຫາຍ;

**ມາດຕາ 46 ເຂດມໍລະດົກສະຖານ**

ມໍລະດົກສະຖານ ໄດ້ແບ່ງອອກເປັນສີ່ເຂດ ດັ່ງນີ້:

1. ເຂດ 1 ແມ່ນ ເຂດໃຈກາງ ເປັນສະຖານທີ່ຕັ້ງຂອງມໍລະດົກ ຊຶ່ງຕ້ອງຮັກສາສະພາບເດີມໄວ້ ແລະ ບໍ່ໃຫ້ມີການປຸກສ້າງ;

2. ເຂດ 2 ແມ່ນ ເຂດອ້ອມຮອບເຂດໃຈກາງ ຊຶ່ງອະນຸຍາດໃຫ້ດຳເນີນກິດຈະກຳ ຈຳນວນໜຶ່ງ ເພື່ອສົ່ງເສີມຄຸນຄ່າຂອງເຂດ 1 ແຕ່ບໍ່ໃຫ້ກໍ່ຄວາມເສຍຫາຍຕໍ່ສະພາບແວດລ້ອມຂອງ ເຂດນັ້ນ;

3. ເຂດ 3 ແມ່ນ ເຂດກັນຊົນ, ເຂດປ້ອງກັນ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອປ້ອງກັນ ແລະ ຮັບໃຊ້ໃຫ້ແກ່ ເຂດ 1 , ເຂດ 2 ເພື່ອຮອງຮັບການພັດທະນາ, ການທ່ອງທ່ຽວ ແລະ ການຂົນສົ່ງ;

4. ເຂດ 4 ແມ່ນ ເຂດຄຸ້ມຄອງ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອຮັບໃຊ້ໃຫ້ແກ່ເຂດ 1, ເຂດ 2 ແລະ ເຂດ 3 ເພື່ອຂະຫຍາຍຕົວເມືອງ ແລະ ຮອງຮັບການທ່ອງທ່ຽວ.

**ມາດຕາ 47 ການປົກປັກຮັກສາເຂດມໍລະດົກສະຖານ**

ເຂດມໍລະດົກສະຖານ ຕ້ອງໄດ້ຮັບການປົກປັກຮັກສາ ເພື່ອບໍ່ໃຫ້ຖືກ ບຸກລຸກ, ທຳລາຍ ຫຼື ເສຍຫາຍ ຈາກການກະທຳຂອງຄົນ ຫຼື ຈາກໄພທຳມະຊາດ.

ໃນກໍລະນີທີ່ມີການບຸກລຸກ, ທຳລາຍນັ້ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງສະກັດກັ້ນ ແລະ ມີມາດຕະການແກ້ໄຂຢ່າງທັນການ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນມໍລະດົກສະຖານຕັ້ງຢູ່ ແລ້ວແຈ້ງໃຫ້ກະຊວງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 48 ການບູລະນະ ແລະ ການປະຕິສັງຂອນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສ່ວນຮ່ວມໃນການບູລະນະ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ.

ການບູລະນະ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດລະດັບທ້ອງຖິ່ນ, ລະດັບຊາດ ນັ້ນຕ້ອງໄດ້ຮັບອະນຸຍາດຈາກກະຊວງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ຕົນຂຶ້ນທະບຽນ.

**ມາດຕາ 49 (ໃໝ່) ການປົວແປງມໍລະດົກທາງດ້ານ ວັດທະນະທຳ ແລະ ປະຫວັດສາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນໂຄງການພັດທະນາ ຫຼື ກິດຈະກຳການເຄື່ອນໄຫວຕ່າງໆທາງດ້ານເສດຖະກິດ-ສັງຄົມ ທີ່ອາດກໍ່ໃຫ້ເກີດຜົນກະທົບໃນທາງລົບ ຫຼື ຜົນເສຍຫາຍຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ໂດຍທາງກົງ ຫຼື ທາງອ້ອມ, ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ ຕ້ອງໄດ້ຮັບການປົວແປງມໍລະດົກດັ່ງກ່າວ ໃຫ້ກັບຄືນສູ່ສະພາບເດີມ ພາຍໃຕ້ການຕິດຕາມກວດກາຂອງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 50 ເງື່ອນໄຂການບູລະນະສ້ອມແປງ ແລະ ການປະຕິສັງຂອນ**

ການບູລະນະ, ສ້ອມແປງ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂ ໃນການບູລະນະສ້ອມແປງ ແລະ ການປະຕິສັງຂອນ ມໍລະດົກແຫ່ງຊາດ ຕ້ອງທີ່ມີນາຍຊ່າງ, ສີມືທີ່ຊຳນານງານທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນ ຢ່າງຖືກຕ້ອງຕາມກົດໝາຍ;

2. ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງມໍລະດົກແຫ່ງຊາດ ບ່ອນມໍລະດົກແຫ່ງຊາດນັ້ນ ໄດ້ຂຶ້ນທະບຽນນຳ. ສຳລັບມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ຕ້ອງຮັກສາຄຸນລັກສະນະເດີມ ຂອງມໍລະດົກແຫ່ງຊາດ ນັ້ນໄວ້.

**ມາດຕາ 51 ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ບໍ່ເປັນວັດຖຸ**

ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດທີ່ບໍ່ເປັນວັດຖຸ ຕ້ອງໄດ້ຂຶ້ນທະບຽນທັງຕ້ອງໄດ້ຮັບການປົກປັກຮັກສາ ແລະ ການອະນຸລັກ.

ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ບໍ່ເປັນວັດຖຸ ຕ້ອງໄປຄຽງຄູ່ກັບການສົ່ງເສີມ, ເຜີຍແຜ່ ແລະ ນຳໃຊ້ຢ່າງກວ້າງຂວາງ ທັງພາຍໃນ ແລະ ຕ່າງປະເທດ.

ການຄົ້ນຄວ້າ, ປະດິດແຕ່ງ ຕ້ອງຮັບປະກັນລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ.

ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວ, ອົງການຈັດຕັ້ງສາກົນທີ່ດຳເນີນການຄົ້ນຄວ້າ, ວິໄຈ ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ທີ່ບໍ່ເປັນວັດຖຸ ຕ້ອງປະຕິບັດໃຫ້ສອດຄ່ອງກັບເນື້ອໃນ ແລະ ຄວາມເປັນຈິງຂອງມໍລະດົກ ລວມທັງຮັກສາຄຸນລັກສະນະເດີມຂອງມໍລະດົກແຫ່ງຊາດນັ້ນໄວ້ ແລະ ກໍຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

# ພາກທີ V
# ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ ແລະ ການຟື້ນຟູ ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ

## ໝວດທີ 1
## ການຄຸ້ມຄອງມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ

**ມາດຕາ 52 ການຄຸ້ມຄອງ**

ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ໃນຂອບເຂດທົ່ວປະເທດ ໄດ້ຮັບການຄຸ້ມຄອງດ້ວຍການຂຶ້ນທະບຽນ ແລະ ການແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງດ້ວຍກັນ ເຊັ່ນ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ລັດ ຄຸ້ມຄອງ, ປົກປ້ອງ ກຳມະສິດ ແລະ ລິຂະສິດ ກ່ຽວກັບມໍລະດົກແຫ່ງຊາດ ທາງດ້ານທຳມະຊາດທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ ພາຍໃນປະເທດ.

**ມາດຕາ 53 ການຂຶ້ນທະບຽນ**

ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີໄວ້ໃນຄອບຄອງຕ້ອງໄດ້ຂຶ້ນທະບຽນ.

ລັດດຳເນີນການຊອກຄົ້ນ, ເກັບກຳມໍລະດົກແຫ່ງຊາດ ທາງດ້ານທຳມະຊາດໃນເຂດຕ່າງໆ ເຊັ່ນ ເຂດທົວທັດທຳມະຊາດ, ເຂດນິເວດວິທະຍາ ເພື່ອປະເມີນຄຸນຄ່າ, ຈັດແບ່ງລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນ ກໍຊຸກຍູ້ໃຫ້ຜູ້ຄອບຄອງມໍລະດົກແຫ່ງຊາດ ສະເໜີຂຶ້ນທະບຽນ ດັ່ງນີ້:

1. ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນນຳພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
2. ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ລະດັບຊາດ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
3. ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ລະດັບພາກພື້ນ ແລະ ລະດັບໂລກ ໃຫ້ຂຶ້ນທະບຽນນຳອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ຕາມການສະເໜີຂອງລັດຖະບານ ແຫ່ງ ສປປ ລາວ;

ພາຍຫຼັງຂຶ້ນທະບຽນແລ້ວ ລັດຈະຮັບຮູ້ມໍລະດົກດັ່ງກ່າວ ເປັນມໍລະດົກແຫ່ງຊາດ ທາງດ້ານທຳມະຊາດພ້ອມທັງຮັບຮູ້ສິດຄອບຄອງຂອງເຈົ້າຂອງມໍລະດົກ.

ຖ້າຫາກມໍລະດົກຍັງບໍ່ໄດ້ຂຶ້ນທະບຽນນັ້ນ ເຈົ້າຂອງມໍລະດົກ ຈະບໍ່ມີສິດດຳເນີນກິດຈະກຳຕ່າງໆ ກ່ຽວກັບມໍລະດົກດັ່ງກ່າວ ເຊັ່ນ ການຈຳລອງແບບ.

ມໍລະດົກແຫ່ງຊາດລະດັບຊາດ ທາງດ້ານທຳມະຊາດ ທີ່ມີຄຸນຄ່າສູງ, ຫາຍາກ ແລະ ເປັນເອກະລັກຂອງຊາດ ທີ່ຮັບການຄົ້ນຄວ້າ ແລະ ຢັ້ງຢືນແລ້ວ ຕ້ອງໄດ້ສະເໜີຂຶ້ນທະບຽນ ກຳມະສິດ ແລະ ລິຂະສິດຂອງຊາດນຳອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ.

**ມາດຕາ 54 (ປັບປຸງ) ການຄຸ້ມຄອງແຫຼ່ງຊີວະນາໆພັນ**

ແຫຼ່ງຊີວະນາໆພັນ ຊຶ່ງເປັນມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດ ເປັນຕົ້ນ ທາມ, ບຶງ, ບຸ່ງ ຕ້ອງໄດ້ຮັບການຄຸ້ມຄອງ ດ້ວຍການກວດກາ, ການຂຶ້ນທະບຽນ ເພື່ອປົກປັກຮັກສາທຳມະຊາດ ໃຫ້ຍືນຍົງ ແລະ ອຸດົມສົມບູນ.

**ມາດຕາ 55 ການຄຸ້ມຄອງປ່າສະຫງວນ**

ປ່າສະຫງວນທີ່ໄດ້ຂຶ້ນທະບຽນເປັນມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດແລ້ວ ຕ້ອງໄດ້ຮັບການຄຸ້ມຄອງ ເພື່ອປົກປັກຮັກສາທຳມະຊາດ ໃຫ້ຍືນຍົງ ແລະ ອຸດົມສົມບູນ.

**ມາດຕາ 56 ການຄຸ້ມຄອງສວນອຸທິຍານ**

ສວນອຸທິຍານທຳມະຊາດ ຊຶ່ງອຸດົມຮັ່ງມີໄປດ້ວຍລະບົບນິເວດ, ສະອາດສວຍງາມ ແລະ ເປັນໜ້າປະທັບໃຈ ທີ່ກາຍເປັນມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດນັ້ນ ຕ້ອງໄດ້ຮັບການຄຸ້ມຄອງ ເພື່ອໃຫ້ເປັນສະຖານທີ່ພັກຜ່ອນສຳລັບນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 57 ການຄຸ້ມຄອງເຂດທິວທັດທຳມະຊາດ**

ເຂດທິວທັດທຳມະຊາດ ຊຶ່ງມີຄຸນຄ່າທາງດ້ານ ທັດສະນີຍະພາບ ອັນສວຍສົດງົດງາມ ແລະ ໂດດເດັ່ນ ທີ່ມີ ພູ, ຜາ, ປ່າໄມ້, ແມ່ນ້ຳ, ລຳເຊ, ນ້ຳຕົກຕາດ ແລະ ອື່ນໆ ຕ້ອງຂຶ້ນທະບຽນ ເປັນມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດ ແລະ ຕ້ອງໄດ້ຮັບການຄຸ້ມຄອງ ເພື່ອຮັກສາຄວາມສວຍງາມ ຂອງທຳມະຊາດ ໃຫ້ຍືນຍົງ ແລະ ອຸດົມສົມບູນ.

**ມາດຕາ 58 (ໃໝ່) ການຄຸ້ມຄອງເຂດທໍລະນີສາດ ແລະ ຊີວະສາດ**

ເຂດທໍລະນີສາດ ແລະ ຊີວະສາດ ທີ່ມີຄຸນຄ່າໂດດເດັ່ນ ທາງດ້ານນິເວດວິທະຍາ ແລະ ວິທະຍາສາດ ເປັນຕົ້ນ ແຮ່ທາດ, ພືດ, ສັດ, ພູ, ຜາ, ປ່າໄມ້ ຕ້ອງຂຶ້ນທະບຽນ ເປັນມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດ ແລະ ຕ້ອງໄດ້ຮັບການຄຸ້ມຄອງ ເພື່ອໃຫ້ມີຄວາມສົມດູນ, ຍືນຍົງ ແລະ ອຸດົມສົມບູນ.

## ໝວດທີ 2
## ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ ແລະ ການຟື້ນຟູ ມໍຣະດົກແຫ່ງຊາດ ທາງດ້ານທຳມະຊາດ

**ມາດຕາ 59 ການນຳໃຊ້**

ມໍຣະດົກແຫ່ງຊາດທາງດ້ານທຳມະຊາດ ຕ້ອງນຳໃຊ້:

1. ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ;
2. ໃຫ້ມີປະສິດທິຜົນ, ຍືນຍົງ, ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;
3. ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 60 ເປົ້າໝາຍການນຳໃຊ້**

ເປົ້າໝາຍການນຳໃຊ້ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ມີເປົ້າໝາຍ ດັ່ງນີ້:

1. ໃຫ້ເປັນພື້ນຖານ ແຫ່ງການຍືນຍົງຄົງຕົວ ຂອງຊາດ, ເປັນກຳລັງດັນ ໃຫ້ສັງຄົມຂະຫຍາຍຕົວທັງແມ່ນຈຸດໝາຍຂອງການພັດທະນາປະເທດຊາດ ໃຫ້ຮັ່ງມີ, ເຂັ້ມແຂງ;

2. ສຶກສາອົບຮົມ, ປຸກຈິດສຳນຶກໃຫ້ພົນລະເມືອງມີນ້ຳໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈ, ມີສະຕິໃນການປົກປັກຮັກສາສະພາບແວດລ້ອມ ໃຫ້ຍືນຍົງ ແລະ ພັດທະນາປະເທດຊາດ ໃຫ້ອຸດົມຮັ່ງມີ;

3. ສົ່ງເສີມອຸດສາຫະກຳການທ່ອງທ່ຽວທຳມະຊາດ;

4. ເຊື່ອມໂຍງກັບການນຳໃຊ້ມໍລະດົກທາງດ້ານທຳມະຊາດ ຂອງພາກພື້ນ ແລະ ສາກົນ;

5. ຄົ້ນຄວ້າ, ວິໄຈ ທາງດ້ານທຳມະຊາດ, ນິເວດວິທະຍາ ແລະ ອື່ນໆ.

**ມາດຕາ 61 ການປົກປັກຮັກສາ ແລະ ການອະນຸລັກ**

ໃນການປົກປັກຮັກສາ ແລະ ການອະນຸລັກ ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງຄາດຄະເນຜົນເສຍຫາຍ ທີ່ຈະເກີດຂຶ້ນແກ່ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ພ້ອມທັງມີມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ;

2. ພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະພັດທະນາອຸດສາຫະກຳ, ກະສິກຳ, ໂຄງລ່າງພື້ນຖານໃນເຂດທີ່ມີມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງມີມາດຕະການ ເພື່ອປົກປັກຮັກສາມໍລະດົກແຫ່ງຊາດດັ່ງກ່າວບໍ່ໃຫ້ຖືກບຸກລຸກ ຫຼື ທຳລາຍ.

**ມາດຕາ 62 (ປັບປຸງ) ການຟື້ນຟູມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ**

ການຟື້ນຟູມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ແມ່ນ ການເຮັດໃຫ້ທຳມະຊາດທີ່ຖືກທຳລາຍ ແລະ ເຊື່ອມໂຊມ ມີການຟື້ນຕົວ ແລະ ໄດ້ຮັບການປັບປຸງໃຫ້ຢູ່ໃນສະພາບທີ່ດີ ແລະ ລະບົບນິເວດ ໃຫ້ມີຄວາມສົມບູນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນໂຄງການພັດທະນາ ຫຼື ກິດຈະກຳການເຄື່ອນໄຫວຕ່າງໆທາງດ້ານເສດຖະກິດ-ສັງຄົມ ທີ່ກໍ່ໃຫ້ເກີດຜົນກະທົບໃນທາງລົບ ຫຼື ຜົນເສຍຫາຍຕໍ່ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ໂດຍທາງກົງ ຫຼື ທາງອ້ອມ, ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ ຕ້ອງໄດ້ຮັບຜິດຊອບຟື້ນຟູ ມໍລະດົກດັ່ງກ່າວ ໃຫ້ກັບຄືນສູ່ສະພາບເດີມ ພາຍໃຕ້ການຕິດຕາມກວດກາ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 63 ເງື່ອນໄຂການຟື້ນຟູ**

ການຟື້ນຟູ ມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂໃນການຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ, ມີທຶນພຽງພໍ, ມີພະນັກງານທີ່ຊຳນານງານ ທາງດ້ານທຳມະຊາດ ແລະ ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ;

2. ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ບ່ອນມໍລະດົກແຫ່ງຊາດນັ້ນ ໄດ້ຂຶ້ນທະບຽນນຳ. ສຳລັບມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ລະດັບຊາດ, ລະດັບພາກພື້ນ ແລະລະດັບໂລກ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ຕ້ອງຮັກສາທິວທັດທຳມະຊາດ ແລະ ລະບົບນິເວດ ໃຫ້ມີການຄົງຕົວ ແລະ ສວຍສົດງົດງາມ.

**ມາດຕາ 64 ການພັດທະນາ**

ການພັດທະນາມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ ແມ່ນ ການເຮັດໃຫ້ມໍລະດົກນັ້ນ ຍືນຍົງ, ອຸດົມສົມບູນ ແລະ ຮັ່ງມີຂຶ້ນ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ການສຶກສາ, ຄົ້ນຄວ້າ, ຊອກຮູ້ຄຸນຄ່າອັນຍອດຍິ່ງຂອງມໍລະດົກດັ່ງກ່າວ ພ້ອມທັງເສີມຂະຫຍາຍທ່າແຮງຂອງມໍລະດົກນັ້ນເຂົ້າໃນວຽກງານທ່ອງທ່ຽວ, ວຽກງານປົກປັກຮັກສາສິ່ງແວດລ້ອມທຳມະຊາດ ໃນຂອບເຂດທົ່ວປະເທດ ທັງເປັນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

## ພາກທີ VI
## ການປະເມີນຜົນກະທົບຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ

**ມາດຕາ 65 (ໃໝ່) ການປະເມີນຜົນກະທົບຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັທະນະທຳ, ປະຫວັດສາດ ແລະ ທຳມະຊາດ**

ການປະເມີນຜົນກະທົບຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແມ່ນ ຂະບວນການສຳຫຼວດ, ສຶກສາ, ຄົ້ນຄວ້າ, ວິໄຈ ແລະ ຄາດຄະເນຜົນກະທົບຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ໃນດ້ານບວກ ແລະ ດ້ານລົບ ທີ່ອາດຈະເກີດຂຶ້ນຈາກໂຄງການພັດທະນາ ຫຼື ກິດຈະກຳການເຄື່ອນໄຫວຕ່າງໆ ທັງໃນໄລຍະສັ້ນ ແລະ ໃນໄລຍະຍາວ ເພື່ອກຳນົດວິທີການ ແລະ ມາດຕະການທີ່ເໝາະສົມ ໃນການປ້ອງກັນ, ຫຼີກເວັ້ນ ແລະ ຫຼຸດຜ່ອນ ຜົນກະທົບທີ່ອາດຈະມີຕໍ່ມໍລະດົກ.

ທຸກໂຄງການພັດທະນາ ຫຼື ກິດຈະການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ເປັນຕົ້ນ ການພັດທະນາ ອຸດສະຫະກຳ, ກະສິກຳ, ໂຄງລ່າງພື້ນຖານ ຊຶ່ງອາດສົ່ງຜົນກະທົບທາງກົງ ຫຼື ທາງອ້ອມ ຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຕ້ອງໄດ້ເຮັດການປະເມີນຜົນກະທົບຕໍ່ມໍລະດົກດັ່ງກ່າວ ພ້ອມທັງສ້າງບົດລາຍງານ ແລະ ແຜນການກ່ຽວກັບວິທີການຄຸ້ມຄອງ, ຕິດຕາມ, ກວດກາ.

ສຳລັບຂັ້ນຕອນ ແລະ ວິທີການ ໃນການປະເມີນຜົນກະທົບຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 66 (ໃໝ່) ການຮັບຮອງການປະເມີນຜົນກະທົບ ຕໍ່ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ**

ການປະເມີນຜົນກະທົບຕໍ່ ມໍລະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຕ້ອງໄດ້ຮັບການຮັບຮອງຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລ້ວຈຶ່ງສາມາດດຳເນີນໂຄງການພັດທະນາ ຫຼື ກິດຈະການການເຄື່ອນໄຫວຕ່າງໆ.

# ພາກທີ VII
# ການພົບເຫັນ, ການພົບພໍ້, ການຄົ້ນພົບ, ການຂຸດຄົ້ນ ແລະ ການທວງຄືນ ມໍຣະດົກແຫ່ງຊາດ

**ມາດຕາ 67 (ໃໝ່) ການພົບເຫັນ, ການພົບພໍ້ ແລະ ການຄົ້ນພົບ ມໍຣະດົກແຫ່ງຊາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ທີ່ໄດ້ພົບເຫັນ, ພົບພໍ້ ແລະ ຄົ້ນພົບມໍຣະດົກແຫ່ງຊາດ ຕ້ອງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງໃນທັນໃດ ພ້ອມທັງໂຈະກິດຈະການນັ້ນ ຈົນກວ່າຈະໄດ້ຮັບການຕົກລົງ ໃຫ້ສືບຕໍ່ ຫຼື ໂຈະກິດກະການດັ່ງກ່າວ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ ພົບເຫັນ, ພົບພໍ້ ແລະ ຄົ້ນພົບ ສະຖານທີ່ ຫຼື ໄດ້ຮັບຂໍ້ມູນກ່ຽວກັບສະຖານທີ່ ທີ່ມີ ຫຼື ສົງໄສວ່າມີມໍຣະດົກແຫ່ງຊາດ, ເຄື່ອງຄ້ຳຂອງຄູນ ຕ້ອງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນທັນໃດ ແລະ ບໍ່ໃຫ້ຂຸດຄົ້ນ ຫຼື ເຄື່ອນຍ້າຍ ໂດຍບໍ່ໄດ້ຮັບອະນຸຍາດ.

**ມາດຕາ 68 (ໃໝ່) ການຂຸດຄົ້ນມໍຣະດົກແຫ່ງຊາດ**

ການຂຸດຄົ້ນມໍລະດົກແຫ່ງຊາດ ແມ່ນ ການຂຸດຄົ້ນທາງດ້ານບູຮານວິທະຍາ ເພື່ອກອບກູ້ຮ່ອງຮອຍຫຼັກຖານທາງວັດຖຸ ຂໍ້ມູນທາງປະຫວັດສາດ ຊຶ່ງອາດລວມທັງສ່ວນທີ່ຢູ່ໃຕ້ດິນ ຫຼື ໃຕ້ນ້ຳ, ແນໃສ່ການສຶກສາ, ສຳຫຼວດ, ຄົ້ນຄວ້າ, ວິໄຈ. ຢັ້ງຢືນຄຸນຄ່າຄວາມໝາຍຄວາມສຳຄັນ ແລະ ອາຍຸຄວາມເກົ່າແກ່ຂອງມໍຣະດົກແຫ່ງຊາດ ນັ້ນຢ່າງມີວິທະຍາສາດ. ການຂຸດຄົ້ນມໍຣະດົກແຫ່ງຊາດ ມີທັງເພື່ອຮັບໃຊ້ວຽກງານການຄົ້ນ ຄວ້າ, ການບູລະນະ, ປະຕິສັງຂອນມໍຣະດົກສະຖານ ແລະ ການກອບກູ້ສຸກເສີນ ໃນກໍລະນີມີການພົບພໍ້ໂດຍບັງເອີນຢູ່ໃນພື້ນທີ່ໂຄງການພັດທະນາເສດຖະກິດ-ສັງຄົມ.

ການຂຸດຄົ້ນມໍຣະດົກແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະສາມາດດຳເນີນການຂຸດຄົ້ນມໍຣະດົກແຫ່ງຊາດ ຕ້ອງມີວຸດທິການສຶກສາກ່ຽວກັບວຽກງານມໍຣະດົກ, ມີປະສົບການຢ່າງໜ້ອຍຫ້າປີ ຂຶ້ນໄປ ແລະ ເປັນທີ່ຍອມຮັບຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ສຳລັບ ການດຳເນີນການຂຸດຄົ້ນມໍຣະດົກແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 69 (ໃໝ່) ການທວງຄືນມໍຣະດົກແຫ່ງຊາດ**

ລັດ ສາມາດທວງຄືນມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ຫຼື ຕົກຢູ່ນອກດິນແດນຂອງ ສປປ ລາວ ຫຼື ຖືກຕ່າງປະເທດເອົາໄປເປັນກຳມະສິດ ຫຼື ລິຂະສິດ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ລັດ ມີສິດທວງຄືນ ດ້ວຍຮູບການຕ່າງໆ ໂດຍປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ VIII
## ສະມາຄົມກ່ຽວກັບມໍຣະດົກ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ

**ມາດຕາ 70 (ໃໝ່) ສະມາຄົມກ່ຽວກັບມໍຣະດົກແຫ່ງຊາດ**

ສະມາຄົມກ່ຽວກັບມໍຣະດົກແຫ່ງຊາດ ແມ່ນ ການຈັດຕັ້ງສັງຄົມ ທີ່ເຕົ້າໂຮມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກິດຈະກຳ ເພື່ອປົກປັກຮັກສາ, ອະນຸລັກ, ບູລະນະ, ສືບທອດ ແລະ ສົ່ງເສີມ ວຽກງານຂອງມໍຣະດົກແຫ່ງຊາດ ທີ່ຢູ່ ສປປ ລາວ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂຶ້ນທະບຽນນຳຂະແໜງການພາຍໃນ.

ສະມາຄົມກ່ຽວກັບມໍຣະດົກແຫ່ງຊາດ ມີບົດບາດຊ່ວຍເຫຼືອ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ, ສ້າງຄວາມເຂັ້ມແຂງ ແລະ ມີສ່ວນຮ່ວມໃນການເຄື່ອນໄຫວວຽກງານກ່ຽວກັບມໍຣະດົກແຫ່ງຊາດທັງພາຍໃນ ແລະ ຕ່າງປະເທດ, ເປັນການຈັດຕັ້ງທີ່ເຂັ້ມແຂງ ທີ່ເປັນກຳລັງແຮງປະກອບສ່ວນເຂົ້າໃນການສົ່ງເສີມ ແລະ ພັດທະນາວຽກງານມໍຣະດົກແຫ່ງຊາດ ໃຫ້ມີການຂະຫຍາຍຕົວທັງປະລິມານ ແລະ ຄຸນນະພາບ.

**ມາດຕາ 71 (ໃໝ່) ສິດ ແລະ ໜ້າທີ່ ຂອງສະມາຄົມກ່ຽວກັບມໍຣະດົກແຫ່ງຊາດ**

ສະມາຄົມກ່ຽວກັບມໍຣະດົກແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ລວມທັງກົດລະບຽບ ໃຫ້ສະມາຊິກຂອງຕົນ ແລະ ມວນຊົນຮັບຮູ້, ເຂົ້າໃຈ ແລະ ປະຕິບັດ;
2. ສ້າງ ແລະ ປັບປຸງການຈັດຕັ້ງຂອງຕົນໃຫ້ເຕີບໃຫຍ່ເຂັ້ມແຂງ, ນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານ;
3. ຊຸກຍູ້ ບຸກຄົນ, ຫົວໜ່ວຍວິສາຫະກິດຜະລິດຕະພັນ ມໍຣະດົກແຫ່ງຊາດ ເຂົ້າເປັນສະມາຊິກຂອງຕົນ, ເພື່ອຊ່ວຍເຫຼືອ ແລະ ສົ່ງເສີມສະມາຊິກໃນການປະກອບອາຊີບ ໃຫ້ຈະເລີນກ້າວໜ້າ, ຄຸ້ມຄອງ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳຂອງສະມາຊິກ;
4. ເປັນຕົວແທນໃຫ້ສະມາຊິກໃນການພົວພັນ, ຮ່ວມມື, ເຂົ້າຮ່ວມກອງປະຊຸມ, ສະເໜີຄຳເຫັນຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
5. ຕິດຕາມການເຄື່ອນໄຫວ, ໃຫ້ຄຳແນະນຳ ແລະ ແກ້ໄຂຂໍ້ຂັດແຍ່ງຂອງສະມາຊິກໃນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະໜອງຂໍ້ມູນ ຂ່າວສານ ໃຫ້ສະມາຊິກຂອງຕົນ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ, ການຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ;
7. ໃຫ້ການຮ່ວມມື, ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປຶກສາຫາລື, ແລກປ່ຽນຄຳເຫັນ ກ່ຽວກັບການພັດທະນາ, ການໂຄສະນາສົ່ງເສີມ ແລະ ການຄຸ້ມຄອງ ມໍຣະດົກແຫ່ງຊາດ;
8. ຝຶກອົບຮົມ, ຍົກລະດັບດ້ານວິຊາສະເພາະກ່ຽວກັບມໍຣະດົກແຫ່ງຊາດ ໃຫ້ແກ່ສະມາຊິກຕົນ;
9. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານມໍຣະດົກແຫ່ງຊາດ ລວມທັງຕົວເລກສະຖິຕິໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IX
## ກອງທຶນມໍຣະດົກແຫ່ງຊາດ

**ມາດຕາ 72 ກອງທຶນມໍຣະດົກແຫ່ງຊາດ**

ກອງທຶນມໍຣະດົກແຫ່ງຊາດ ແມ່ນ ກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານມໍຣະດົກແຫ່ງຊາດ ເປັນຕົ້ນ ການຄຸ້ມຄອງ, ການປົກປັກຮັກສາ, ອະນຸລັກ, ບູລະນະສ້ອມແປງ ແລະ ປະຕິສັງຂອນມໍຣະດົກແຫ່ງຊາດ ໃຫ້ຍືນຍົງ ແລະ ພັດທະນາ.

**ມາດຕາ 73 (ປັບປຸງ) ແຫຼ່ງກອງທຶນມໍຣະດົກແຫ່ງຊາດ**

ແຫຼ່ງກອງທຶນມໍຣະດົກແຫ່ງຊາດ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ລາຍໄດ້ຈາກການນຳໃຊ້ຄຸນຄ່າຂອງມໍຣະດົກແຫ່ງຊາດ ເຊັ່ນ ຄ່າການບໍລິການເຂົ້າຊົມ, ຄ່າການຖ່າຍທຳ ເພື່ອຈຸດປະສົງທາງການຄ້າ ແລະ ການຄົ້ນຄວ້າ, ວິໄຈ ມໍຣະດົກແຫ່ງຊາດ;
3. ພັນທະຈາກພາກສ່ວນຕ່າງໆທີ່ດຳເນີນກິດຈະການ ຊຶ່ງຕິດພັນກັບມໍຣະດົກແຫ່ງຊາດ;
4. ການປະກອບສ່ວນ, ການຊ່ວຍເຫຼືອ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ລາຍໄດ້ຈາກການເຄື່ອນໄຫວກິດຈະກຳ ກ່ຽວກັບມໍຣະດົກແຫ່ງຊາດ ແລະ ອື່ນໆ ຕາມກົດໝາຍ.

**ມາດຕາ 74 ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນມໍຣະດົກແຫ່ງຊາດ**

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນມໍຣະດົກແຫ່ງຊາດ ຕ້ອງລວມສູນຜ່ານປະຕູດຽວ, ຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້, ສອດຄ່ອງກັບຈຸດປະສົງທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້, ຖືກຕ້ອງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບການເຄື່ອນໄຫວ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນມໍຣະດົກແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ X
## ຂໍ້ຫ້າມ

**ມາດຕາ 75 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ ຫຼື ທຳລາຍ ແຫຼ່ງບູຮານວິທະຍາ, ວັດຖຸບູຮານ, ພຣະພຸດທະຮູບ, ບູຮານສະຖານ, ປູສະນີຍະສະຖານ, ສະຖານທີ່ປະຫວັດສາດ, ບຸກຍຶດ, ຈັບຈອງ ທີ່ດິນເຂດອະນຸລັກມໍຣະດົກແຫ່ງຊາດ, ປ່ຽນແປງສະຖານະພາບເດີມ ຂອງມໍຣະດົກແຫ່ງຊາດ ໄປສູ່ສະຖານະພາບອື່ນ, ບິດເບືອນເນື້ອໃນປະຫວັດສາດ;
2. ສຳປະທານມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທຳ ແລະ ປະຫວັດສາດ ລະດັບຊາດ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3. ນຳໃຊ້ເຂດມໍລະດົກແຫ່ງຊາດ ເຊັ່ນ ມໍຣະດົກສະຖານ, ສະຖານທີ່ປະຫວັດສາດ ເຂົ້າໃນເປົ້າໝາຍໃດໜຶ່ງທີ່ຈະພາໃຫ້ປ່ຽນແປງສະຖານະພາບເດີມ;

4. ຈົດກ່າຍ, ລອກແບບ ເອົາຜົນງານການຄົ້ນຄວ້າ, ປະດິດແຕ່ງຂອງຜູ້ອື່ນ ກ່ຽວກັບມໍຣະດົກແຫ່ງຊາດ ມາເປັນລິຂະສິດຂອງຕົນ ຫຼື ພິມເຜີຍແຜ່ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ແລະພາກສ່ວນທີ່ກ່ຽວຂ້ອງ;

5. ທຳລາຍປ່າສະຫງວນແຫ່ງຊາດ ຫຼື ຂຸດຄົ້ນຊັບພະຍາກອນທຳມະຊາດຢູ່ໜ້າດິນ, ໃຕ້ດິນ, ໃຕ້ນ້ຳ, ໃນເຂດມໍຣະດົກແຫ່ງຊາດ, ບຸກຍຶດ, ຈັບຈອງທີ່ດິນເຂດປົກປັກຮັກສາ ຊີວະນາໆພັນ, ສວນອຸດທິຍານ ແລະ ເຂດທິວທັດທຳມະຊາດ ລວມທັງ ການປ່ຽນແປງສະຖານະພາບເດີມຂອງມໍຣະດົກແຫ່ງຊາດ;

6. ນຳເຂົ້າ, ຈຳໜ່າຍ ແລະ ເຜີຍແຜ່ ຜະລິດຕະພັນທາງດ້ານວັດທະນະທຳ ຂອງຕ່າງປະເທດ ທີ່ເປັນວັດຖຸ ໂດຍສະເພາະພຣະພຸດທະຮູບ ຫຼື ທີ່ບໍ່ເປັນວັດຖຸ ທີ່ບໍ່ສອດຄ່ອງກັບວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ;

7. ໂຄສະນາ ເຜີຍແຜ່ ກ່ຽວກັບມໍຣະດົກແຫ່ງຊາດ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

8. ດຳເນີນການສຳຫຼວດ, ຄົ້ນຄວ້າ ແລະ ຂຸດຄົ້ນ ມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

9. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ.

## ມາດຕາ 76 ຂໍ້ຫ້າມສຳລັບພະນັກງານທີ່ຮັບຜິດຊອບວຽກງານມໍຣະດົກແຫ່ງຊາດ

ຫ້າມ ພະນັກງານທີ່ຮັບຜິດຊອບວຽກງານມໍຣະດົກແຫ່ງຊາດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຈາກວຽກງານມໍຣະດົກແຫ່ງຊາດ;

2. ສວຍໃຊ້ສິດ, ໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ຊຶ່ງການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

5. ປອມແປງເອກະສານ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

6. ດຳເນີນ ຫຼື ເຂົ້າຮ່ວມທຸລະກິດ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ໃນທຸກຮູບແບບ;

7. ທຳລາຍຂໍ້ມູນຫຼັກຖານ, ປົກປັງ, ເຊື່ອງອຳລາຍຮັບ, ໃຫ້ ຫຼື ຮັບ, ທວງເອົາ, ຂໍເອົາສິນບົນ, ສົມຮູ້ຮ່ວມຄິດກັບບຸກຄົນອື່ນ ແລະ ຊຸກເຊື່ອງການກະທຳຜິດທີ່ຕິດພັນກັບວຽກງານມໍຣະດົກແຫ່ງຊາດ;

8. ປ່ຽນແທນ, ປ່ຽນເອົາ ວັດຖຸ, ຍຶດເອົາເຂດມໍຣະດົກແຫ່ງຊາດ;

9. ໂຄສະນາ ບິດເບືອນຄວາມຈິງ ກ່ຽວກັບເນື້ອໃນ, ຂອບເຂດການເຄື່ອນໄຫວ, ການຊື້ ຂາຍ ວັດຖຸພັນ, ຜະລິດຕະພັນ ກ່ຽວກັບມໍຣະດົກແຫ່ງຊາດ;

10. ເກັບຄ່າທຳນຽມ, ຄ່າບໍລິການ ບໍ່ຖືກຕ້ອງຕາມລະບຽບການ;

11. ກ່າຍ, ລອກແບບ, ຈຳລອງແບບ ວັດຖຸພັນ, ຜະລິດຕະພັນ ກ່ຽວກັບມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

12. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

ມາດຕາ 77 (ປັບປຸງ) ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ອື່ນທີ່ກ່ຽວຂ້ອງ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ປອມແປງ, ລັກລອບ, ຮຽນແບບ ແລະ ຂຸດເຊື່ອງ ມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ໝິ່ນປະໝາດ, ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນຕໍ່ພະນັກງານທີ່ກ່ຽວຂ້ອງ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ພັກພວກ ທີ່ພົວພັນກັບວຽກງານມໍຣະດົກແຫ່ງຊາດ;

3. ດຳເນີນທຸລະກິດກ່ຽວກັບມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງ;

5. ປະຕິເສດການສະໜອງຂໍ້ມູນ, ຮ່ວມມືໃນການປົກປິດ ແລະ ແກ່ຍາວການຄົ້ນຄວ້າວຽກງານມໍຣະດົກແຫ່ງຊາດ;

6. ຊື້ ຂາຍ, ທຳລາຍ, ຂຸດຄົ້ນ, ນຳເຂົ້າ, ສົ່ງອອກ ມໍຣະດົກແຫ່ງຊາດໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

## ພາກທີ XI

## ການຄຸ້ມຄອງ ແລະ ການກວດກາ

### ໝວດທີ 1

### ການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ

ມາດຕາ 78 (ປັບປຸງ) ການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ

ລັດຖະບານ ຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

ນອກຈາກນີ້ ກໍຍັງມີຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ຂັ້ນສູນກາງ ຊຶ່ງແມ່ນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃນການຄົ້ນຄວ້າ, ຊີ້ນຳ, ປະສານງານກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງມໍຣະດົກແຫ່ງຊາດ.

ຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ຂັ້ນສູນກາງ ໄດ້ຮັບການແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ຂັ້ນສູນກາງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໃນກໍລະນີຈຳເປັນ ອາດຈະສ້າງຕັ້ງຄະນະກຳມະການຄຸ້ມຄອງມໍລະດົກແຫ່ງຊາດ ຂັ້ນທ້ອງຖິ່ນຂຶ້ນກໍໄດ້.

**ມາດຕາ 79 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ກ່ຽວກັບວຽກງານມໍລະດົກແຫ່ງຊາດ;
4. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານມໍລະດົກແຫ່ງຊາດ;
5. ຊີ້ນຳການສຳຫຼວດ, ເກັບກຳຂໍ້ມູນ, ວິໄຈ, ຂຸດຄົ້ນມໍລະດົກແຫ່ງຊາດແຕ່ລະປະເພດ;
6. ຮັບຜິດຊອບໂດຍກົງຕໍ່ມໍລະດົກລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ;
7. ຊີ້ນຳ, ຊຸກຍູ້, ຕິດຕາມ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຈັດຕັ້ງປະຕິບັດກົດໝາຍ, ແຜນການ, ໂຄງການ ກ່ຽວກັບວຽກງານມໍລະດົກແຫ່ງຊາດ;
8. ຂຶ້ນທະບຽນ ແລະ ອອກອະນຸຍາດ ກ່ຽວກັບວຽກງານມໍລະດົກແຫ່ງຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
9. ສ້າງ, ບຳລຸງ, ຝຶກອົບຮົມ ແລະ ນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານມໍລະດົກແຫ່ງຊາດ;
10. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ;
11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານມໍລະດົກແຫ່ງຊາດ;
12. ສະຫຼຸບ, ລາຍງານ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານມໍລະດົກແຫ່ງຊາດ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ກົດໝາຍ, ແຜນການ, ໂຄງການຂອງກະຊວງ ມາເປັນລະບຽບການ, ແຜນການ, ໂຄງການຂອງຕົນ ແລ້ວຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ກ່ຽວກັບວຽກງານມໍລະດົກແຫ່ງຊາດ;

3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານມໍຣະດົກແຫ່ງຊາດ;

4. ສຳຫຼວດ, ເກັບກຳຂໍ້ມູນ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

5. ຂຶ້ນທະບຽນ ແລະ ອອກອະນຸຍາດ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

6. ຊີ້ນຳ, ຊຸກຍູ້ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ໃນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ ຕາມການມອບໝາຍ;

9. ສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ແລ້ວລາຍງານຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 81 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ແຜນການ, ໂຄງການ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

2. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

3. ຄົ້ນຄວ້າ, ສ້າງແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນວຽກງານມໍຣະດົກແຫ່ງຊາດ;

4. ສຳຫຼວດ, ເກັບກຳຂໍ້ມູນ, ຂຶ້ນບັນຊີ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

5. ໃຫ້ຄວາມເຫັນກ່ຽວກັບການອະນຸຍາດໃຫ້ດຳເນີນວຽກງານມໍຣະດົກແຫ່ງຊາດ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

7. ສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ແລ້ວລາຍງານ ຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ຂັ້ນເມືອງ ແລະ ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ປະຕິສັງຂອນ, ນຳໃຊ້ ແລະ ຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ສຳຫຼວດ, ຂຶ້ນບັນຊີມໍຣະດົກແຫ່ງຊາດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອໃຫ້ຂັ້ນເທິງ ພິຈາລະນາ;

3. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ ຕໍ່ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 83 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ຂະແໜງການອື່ນ ເປັນຕົ້ນ ຂະແໜງການໂຍທາທິການ ແລະ ຂົນສົ່ງ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຂະແໜງການພາຍໃນ, ສາທາລະນະສຸກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ມີ ສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານມໍຣະດົກແຫ່ງຊາດ

**ມາດຕາ 84 ການກວດກາວຽກງານມໍຣະດົກແຫ່ງຊາດ**

ການກວດກາວຽກງານມໍຣະດົກແຫ່ງຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານມໍຣະດົກແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 78 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 85 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານມໍຣະດົກແຫ່ງຊາດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

2. ການສ້າງ ແລະ ການປະຕິບັດແຜນການ, ໂຄງການກ່ຽວກັບວຽກງານມໍຣະດົກແຫ່ງຊາດໃນແຕ່ລະໄລຍະ;

3. ລັກສະນະ, ເນື້ອໃນ ຂອງຂໍ້ມູນມໍຣະດົກແຫ່ງຊາດ ທີ່ນຳໄປໂຄສະນາ ແລະ ເຜີຍແຜ່;

4. ການສ້າງ, ບຳລຸງ, ນຳໃຊ້ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານທີ່ຮັບຜິດຊອບວຽກງານມໍຣະດົກແຫ່ງຊາດ;

5. ການປະກອບ ແລະ ນຳໃຊ້ວັດຖຸປະກອນ, ພາຫະນະ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດວຽກງານມໍຣະດົກແຫ່ງຊາດ;

6. ການແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານມໍຣະດົກແຫ່ງຊາດ;

7. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 86 (ໃໝ່) ຮູບການ ການກວດກາ**

ຮູບການ ການກວດກາວຽກງານມໍຣະດົກແຫ່ງຊາດ ມີ ສາມຮູບການ ຄື:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຂອງອົງການບໍລິຫານຢ່າງເປັນປະຈຳ ແລະ ກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດກາຕາມ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າບໍລິຫານ, ຄະນະກວດກາແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານມໍຣະດົກແຫ່ງຊາດນັ້ນ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 87 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາມໍຣະດົກແຫ່ງຊາດ ຈະໄດ້ຮັບການຍ້ອງຍໍສັນລະເສີນ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ຜູ້ມີຜົນງານໃນການພົບເຫັນ, ພົບພໍ້, ຄົ້ນຄວ້າ ຫຼື ໃຫ້ຂໍ້ມູນ ທີ່ເປັນປະໂຫຍດ ກ່ຽວກັບມໍຣະດົກແຫ່ງຊາດນັ້ນ ນອກຈາກຈະໄດ້ຮັບນະໂຍບາຍຕາມວັກທີໜຶ່ງ ເທິງນີ້ແລ້ວ ຍັງຈະໄດ້ຮັບຜົນປະໂຫຍດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 88 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

ສຳລັບພຶດຕິກຳ ແລະ ອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 89 (ໃໝ່) ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ຫາກໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການທຳຜິດທາງອາຍາ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

ສຳລັບການກະທຳຜິດທາງອາຍາ ກ່ຽວກັບມໍຣະດົກແຫ່ງຊາດ ຍັງມີການຊື້ ຂາຍ, ການທຳລາຍ, ການຂຸດຄົ້ນ, ການນຳເຂົ້າ ຫຼື ສົ່ງອອກ, ການໂຄສະນາ ແລະ ເຜີຍແຜ່.

**ມາດຕາ 90 (ໃໝ່) ການຊື້ ຂາຍ ມໍຣະດົກແຫ່ງຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນ, ນິຕິບຸກຄົນ ຫາກໄດ້ຊື້ ຂາຍ ມໍຣະດົກແຫ່ງຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີ ການຊື້ ຂາຍ ມໍຣະດົກແຫ່ງຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຫາກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຄຸນຄ່າມໍຣະດົກແຫ່ງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 91 (ໃໝ່) ການທຳລາຍມໍຣະດົກແຫ່ງຊາດ**

ບຸກຄົນ, ນິຕິບຸກຄົນ ຫາກໄດ້ທຳລາຍ ມໍຣະດົກແຫ່ງຊາດ ທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ແປດປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 92 (ໃໝ່) ການຂຸດຄົ້ນມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ຫາກໄດ້ຂຸດຄົ້ນມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີ ການຂຸດຄົ້ນມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ ຫາກມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຄຸນຄ່າມໍຣະດົກແຫ່ງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 93 (ໃໝ່) ການນຳເຂົ້າ ຫຼື ສົ່ງອອກ ມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ຫາກນຳເຂົ້າ ຫຼື ສົ່ງອອກ ມໍຣະດົກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີ ການນຳເຂົ້າ ຫຼື ສົ່ງອອກ ມໍຣະດົກແຫ່ງຊາດໂດຍບໍ່ໄດ້ຮັບອະນຸຍາດ ຫາກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຄຸນຄ່າມໍຣະດົກແຫ່ງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

**ມາດຕາ 94 (ໃໝ່) ການໂຄສະນາ ເຜີຍແຜ່ ກ່ຽວກັບມໍຣະດົກແຫ່ງຊາດ**

ບຸກຄົນ, ນິຕິບຸກຄົນ ຫາກໂຄສະນາ ເຜີຍແຜ່ ກ່ຽວກັບມໍຣະດົກແຫ່ງຊາດ ດ້ວຍການກະທຳທີ່ເປັນລາມົກອະນາຈານ, ເສື່ອມເສຍ, ບໍ່ເໝາະສົມ, ບໍ່ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງສ້າງຄວາມເສຍຫາຍ ແກ່ມໍຣະດົກແຫ່ງຊາດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 95 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 96 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ສະບັບເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ